# ພາກັນມາສ້າງພາລະກິດຢູ່ບໍ່ຫານ

ຄຽງຄູ່ກັບການເປີດນຳໃຊ້ທາງລົດໄຟ ລາວ-ຈີນ ຢ່າງເປັນທາງການ ແລະ ການສ້າງສາເຂດຮ່ວມມືເສດຖະກິດ ບໍ່ຫານ ສປ ຈີນ - ບໍ່ເຕ່ນ ສປປ ລາວ, ທ່າແຮງດ້ານທີ່ຕັ້ງຂອງບໍ່ຫານ ທີ່ຕັ້ງຢູ່ເຂດຊາຍແດນ ຈີນ-ລາວ ໄດ້ກາຍເປັນພະລັງຂັບເຄື່ອນດ້ານການພັດທະນາຢ່າງບໍ່ຢຸດຢັ້ງ. ເດືອນເມສາ 2024, ນະຄອນຄຸນໝິງ ໄດ້ປົກຄອງຕາແສງບໍ່ຫານ ຢ່າງເປັນທາງການ ເຊິ່ງເຮັດໃຫ້ເມືອງນ້ອຍໆ ແຫ່ງນີ້ ໄດ້ກາຍເປັນຕົວເມືອງຊາຍແດນສາກົນ ແລະ ຕົວເມືອງສ້າງພາລະກິດທີ່ຄຶກຄື້ນ. ການປ່ຽນແປງຂອງບໍ່ຫານ ເກີດຂຶ້ນທຸກມື້ ແລະ ເກີດຢູ່ນຳວິສາຫະກິດທຸກແຫ່ງ ແລະ ທຸກຄົນ. ໃນໜັງສືພິມສະບັບນີ້, ພວກເຮົາຈະໄປເກັບກຳຂ່າວນຳສຳນັກງານທະນາຍຄວາມແຫ່ງໜຶ່ງຂອງແຂວງຢຸນນານ ແລະ ວິສາຫະກິດນະຄອນຊຽງໄຮ້ແຫ່ງໜຶ່ງທີ່ມາສ້າງພາລະກິດຢູ່ບໍ່ຫານ ເພື່ອຮັບຮູ້ເລື່ອງລາວຂອງສອງບໍລິສັດນີ້ ແລະ ຂະບວນການເປີດປະຕູສູ່ພາຍນອກ ແລະ ການປ່ຽນແປງຂອງບໍ່ຫານ.




## ມາສ້າງພາລະກິດຢູ່ບໍ່ຫານ ທີ່ໄກຈາກນະຄອນຊຽງໄຮ້ 3.000 ກິໂລແມັດ

ໃນຖານະເປັນໜຶ່ງໃນສະມາຊິກໃນທີມງານ ທີ່ມາເຮັດວຽກຢູ່ບໍ່ຫານ ຂອງກຸ່ມບໍລິສັດລິນກາງ ຊຽງໄຮ້, ທ່ານ ສົງຊຽວລີ (Cong Xiaoli) ໄດ້ເປັນສັກຂີພິຍານໃຫ້ແກ່ການເຊື່ອມໂຍງເຂົ້າກັນລະຫວ່າງ "ພະລັງຊຽງໄຮ້" ແລະ "ຄວາມໄວບໍ່ຫານ". ເດືອນກໍລະກົດ 2023, ກຸ່ມບໍລິສັດລິນກາງຊຽງໄຮ້ ໄດ້ເຊັນສັນຍາຂອບການຮ່ວມມືຍຸດທະສາດກັບນະຄອນຄຸນໝິງ ເພື່ອຮ່ວມກັນສ້າງເຂດຮ່ວມມືເສດຖະກິດບໍ່ຫານ-ບໍ່ເຕ່ນ. ກຸ່ມບໍລິສັດລິນກາງ ໄດ້ສ້າງຕັ້ງບໍລິສັດພັດທະນາຮ່ວມດ້ານອຸດສາຫະກຳ ຊຽງໄຮ້-ຢຸນນານ ບໍ່ຫານ ຈຳກັດ, ທ່ານ ສົງຊຽວລີ ມາຮັບຕຳແໜ່ງເປັນຮອງຜູ້ອຳນວຍການປະຈຳການຂອງບໍລິສັດ ແລະ ເລີ່ມຕົ້ນຂະບວນການສ້າງພາລະກິດຢູ່ບໍ່ຫານຂອງຕົນ.

ທ່ານ ສົງຊຽວລີ ເຫັນວ່າ: ເຂດຮ່ວມມືເສດຖະກິດ ບໍ່ຫານ-ບໍ່ເຕ່ນ ເປັນສະຖານທີ່ສຳຄັນໃນການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ແລະ ກໍແມ່ນຕົວເມືອງເປີດປະຕູສູ່ອາຊຽນທີ່ສຳຄັນຂອງຈີນ. ກຸ່ມບໍລິສັດລິນກາງ ມີບົດຮຽນທີ່ອຸດົມສົມບູນໃນການພັດທະນາສວນອຸດສາຫະກຳ ແລະ ບໍ່ຫານ ມີທ່າແຮງດ້ານທີ່ຕັ້ງພູມສາດ, ສອງຝ່າຍຈຶ່ງໄດ້ຕົກລົງຮ່ວມມືກັນ. ກຸ່ມບໍລິສັດລິນກາງ ໄດ້ສຸມຄວາມພະຍາຍາມໃນດ້ານການປະຕິບັດໂຄງການ, ການດຶງດູດນັກທຸລະກິດມາລົງທຶນໃນດ້ານອຸດສາຫະກຳ ແລະ ໂຄງການທາງລົດໄຟ ລາວ-ຈີນ ເພື່ອຊຸກຍູ້ການຮ່ວມມືລະຫວ່າງນະຄອນຊຽງໄຮ້ ແລະ ແຂວງຢຸນນານ ກ້າວຂຶ້ນສູ່ລະດັບໃໝ່.

ປັດຈຸບັນນີ້, ສູນບໍລິການຂ້າມຊາດ ບໍ່ຫານ-ບໍ່ເຕ່ນ ພວມດຳເນີນການກໍ່ສ້າງ ເຊິ່ງມີໂຄງການຕຶກຫ້ອງການ, ການຄ້າ ແລະ ສູນປະຊຸມ, ຈະກາຍເປັນສະຖານທີ່ສຳຄັນ ສຳລັບການຮ່ວມມືດ້ານອຸດສາຫະກຳ ລະຫວ່າງ ນະຄອນຊຽງໄຮ້ ແລະ ແຂວງຢຸນນານ. ກຸ່ມບໍລິສັດລິນກາງ ໄດ້ເອົາທ່າແຮງດ້ານການດຶງດູດການລົງທຶນຂອງຕົນ ປະສານສົມທົບກັບເອກະລັກພິເສດຂອງແຂວງຢຸນນານ ໂດຍໄດ້ສ້າງກົນໄກປະສານງານກັບ 16 ເມືອງ ຂອງນະຄອນຊຽງໄຮ້ ເພື່ອຮ່ວມກັນຊຸກຍູ້ໃຫ້ອຸດສາຫະກຳຕ່າງໆ ຂອງນະຄອນຊຽງໄຮ້ ແລະ ແຂວງຢຸນນານ ໄປພັດທະນາຢູ່ບໍ່ຫານ.

ໃນດ້ານການຄົ້ນຄວ້າອຸດສາຫະກຳ, ກຸ່ມບໍລິສັດລິນກາງ ໄດ້ຮ່ວມມືກັບສະຖາບັນການສຶກສາຊັ້ນສູງ ຂອງນະຄອນຊຽງໄຮ້ ເພື່ອດຳເນີນການຄົ້ນຄວ້າ ກ່ຽວກັບການສ້າງສາດ່ານຊາຍແດນອັດສະລິຍະ ແລະ ການປະດິດສ້າງໃໝ່ ດ້ານນະໂຍບາຍ. ໃນດ້ານການຮ່ວມກັນດຶງດູດການລົງທຶນ, ກຸ່ມບໍລິສັດລິນກາງ ໄດ້ປະສານສົມທົບກັບຄະນະກຳມະການຄຸ້ມຄອງບໍ່ຫານ ເພື່ອສ້າງກົນໄກເຊື່ອມຕໍ່ລະຫວ່າງຄະນະກຳມະການຄຸ້ມຄອງ ແລະ ວິສາຫະກິດ ໂດຍໄດ້ປະສານງານກັບສະມາຄົມ 10 ກວ່າແຫ່ງ ເຊັ່ນ: ສະຫະພັນວິສາຫະກິດນະຄອນຊຽງໄຮ້ ເປັນຕົ້ນ ເຊິ່ງໄດ້ຈັດວາງວິສາຫະກິດ 170 ກວ່າແຫ່ງ ໄປທັດສະນະສຶກສາຢູ່ບໍ່ຫານ, ໄດ້ເຊັນສັນຍາຮ່ວມມືຍຸດທະສາດກັບວິສາຫະກິດ 40 ກວ່າແຫ່ງ ແລະ ໄດ້ຊຸກຍູ້ໃຫ້ວິສາຫະກິດ 10 ແຫ່ງ ໄປສ້າງພາລະກິດຢູ່ບໍ່ຫານ.

ທ່ານ ສົງຊຽວລີ ອຸທານວ່າ: ເປົ້າໝາຍພັດທະນາຮ່ວມກັນ ເຮັດໃຫ້ກຸ່ມບໍລິສັດລິນກາງ ໄດ້ພົວພັນກັນຢ່າງແໜ້ນແຟ້ນກັບບໍ່ຫານ ທີ່ຢູ່ໄກຈາກກັນ 3.000 ກິໂລແມັດ. ບໍ່ຫານ ໃນປັດຈຸບັນ, ຖະໜົນຫົນທາງໄດ້ສ້າງສຳເລັດຮຽບຮ້ອຍແລ້ວ, ໂຮງງານໄດ້ສ້າງຕັ້ງຂຶ້ນແລ້ວ ແລະ ນັບມື້ນັບຈະເລີນຮຸ່ງເຮືອງຂຶ້ນແລ້ວ.

ທ່ານ ສົງຊຽວລີ ເຫັນວ່າ: ການປະສານງານດ້ານອຸດສາຫະກຳ ລະຫວ່າງ ພາກຕາເວັນອອກ ແລະ ພາກຕາເວັນຕົກຂອງຈີນ ບໍ່ຈຳກັດຢູ່ພາຍໃນປະເທດເທົ່ານັ້ນ, ວິສາຫະກິດພາກຕາເວັນອອກ ກໍມີຄວາມຕ້ອງການຕໍ່ຕະຫຼາດອາຊີຕາເວັນອອກສ່ຽງໃຕ້ເຊັ່ນດຽວກັນ. ປີນີ້, ທາງບໍລິສັດລິນກາງ ຫວັງວ່າ: ຈະສາມາດຂຸດຄົ້ນ "ໂອກາດບໍ່ຫານ" ຫຼາຍກວ່າເກົ່າ ເພື່ອພັດທະນາຮ່ວມກັບວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ.

## ສຳນັກງານທະນາຍຄວາມທີ່ມີຊື່ສຽງ ຂອງແຂວງຢຸນນານ ໄດ້ເປີດສາຂາຢູ່ດ່ານບໍ່ຫານ.

ວັນທີ 31 ພຶດສະພາ ປີ 2023, ທ່ານ ວາງເວີຍຜິງ (Wang Weiping) ຜູ້ຮ່ວມສ້າງຕັ້ງທັງເປັນຫົວໜ້າຂອງສຳນັກງານທະນາຍຄວາມ ທົງສີ ໄດ້ເດີນທາງໄປເຖິງບໍ່ຫານ ເປັນຄັ້ງທຳອິດ. ເມື່ອໄປເຖິງບໍ່ຫານ ຊຶ່ງເປັນດິນແດນທີ່ເຕັມໄປດ້ວຍຄວາມຫວັງແຫ່ງນີ້, ທ່ານ ຮູ້ສຶກວ່າ: ບໍ່ຫານ ທີ່ພວມຈະເລີນຂຶ້ນ ຕ້ອງການການບໍລິການດ້ານກົດໝາຍສາກົນ ແລະ ຕ້ອງການກຳລັງຂອງທະນາຍຄວາມ.

ເມື່ອກັບຄືນນະຄອນຄຸນໝິງ, ທ່ານ ວາງເວີຍຜິງ ແລະ ທີມງານຂອງຕົນ ໄດ້ເຄື່ອນໄຫວໃນທັນທີ. ຫຼັງຈາກນັ້ນໜຶ່ງເດືອນຄື: ເດືອນກໍລະກົດ 2023, ສຳນັກງານທະນາຍຄວາມທົງສີຢຸນນານ ປະຈຳເຂດຮ່ວມມືເສດຖະກິດ ບໍ່ຫານ-ບໍ່ເຕ່ນ ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະ ກາຍເປັນສຳນັກງານທະນາຍຄວາມ ພຽງແຫ່ງດຽວ ຂອງບໍ່ຫານ ຈົນມາເຖິງປັດຈຸບັນ.

ເມື່ອເວົ້າເຖິງຈຸດປະສົງທີ່ມາສ້າງພາລະກິດຢູ່ບໍ່ຫານ. ທ່ານ ວາງເວີຍຜິງ ກ່າວວ່າ: ການເປີດນຳໃຊ້ທາງລົດໄຟ ລາວ-ຈີນ ແລະ ສັນຍາຄູ່ຮ່ວມເສດຖະກິດຮອບດ້ານຂອງພາກພື້ນ ຫຼື RCEP ມີຜົນບັງຄັບໃຊ້ຢ່າງເປັນທາງການ ໄດ້ເຮັດໃຫ້ແຂວງຢຸນນານ ໄດ້ຢືນຢູ່ແຖວໜ້າແຫ່ງການເປີດປະຕູສູ່ພາຍນອກ ທີ່ອວ່າຍໜ້າໄປສູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້, ລະດູບານໃໝ່ແຫ່ງການບໍລິການດ້ານກົດໝາຍຕໍ່ຕ່າງປະເທດ ໄດ້ໝູນວຽນມາເຖິງແລ້ວ. ທ່ານ ເຊື່ອໝັ້ນວ່າ: ອະນາຄົດຂອງບໍ່ຫານເຕັມໄປດ້ວຍກາລະໂອກາດ.

ທ່ານ ວາງເວີຍຜິງ ກ່າວວ່າ: ການບໍລິການດ້ານກົດໝາຍກັບດ່ານ ແລະ ການບໍລິການດ້ານກົດໝາຍກ່ຽວກັບກົດໝາຍແຫ່ງ ສປປ ລາວ ຢູ່ດ່ານບໍ່ຫານ ຈະເປັນວຽກງານເພີ່ມໃໝ່ທີ່ສຳຄັນ. ເພື່ອບໍລິການລູກຄ້າໄດ້ດີກວ່າເກົ່າ, ທ່ານ ໄດ້ນຳພາທີມງານຮຽນຮູ້ກົດໝາຍ ແຮງງານຂອງ 5 ປະເທດ ຕາມລຳແມ່ນ້ຳຂອງ ແລະ ຍົກຄວາມສາມາດດ້ານພາສາໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ. ປີໜຶ່ງ ທ່ານ ວາງເວີຍຜິງ ຈະປະຈຳການຢູ່ບໍ່ຫານເປັນເວລາເຄິ່ງປີ, ທ່ານ ກໍເປັນສັກຂີພິຍານໃຫ້ແກ່ການພັດທະນາຢ່າງວ່ອງໄວຂອງບໍ່ຫານ ເຊັ່ນດຽວກັນ.

ຄຽງຄູ່ກັບການບໍລິການດ້ານກົດໝາຍ ໄດ້ຂະຫຍາຍກວ້າງອອກເລື້ອຍໆ, ສຳນັກງານທະນາຍຄວາມ ທົງສີ ກໍພວມພິຈາລະນາ ຈະເປີດສາຂາຢູ່ດ່ານບໍ່ເຕ່ນ ສປປ ລາວ ເພື່ອບັນລຸການພັດທະນາແບບຊ່ວຍຊູຍູ້ໜູນກັນ. ທ່ານ ວາງເວີຍຜິງ ຫວັງວ່າ: ຈະມີສະຖາບັນການສຶກສາລົງເລິກການຮ່ວມມືກັບສຳນັກງານຕົນນັບມື້ຫຼາຍຂຶ້ນ ເພື່ອດຶງດູດຜູ້ມີຄວາມຮູ້ຄວາມສາມາດທັງດ້ານພາສາຂອງບັນດາປະເທດຕາມລຳແມ່ນ້ຳຂອງ ແລະ ມີຄວາມຮູ້ດ້ານກົດໝາຍ ເຂົ້າມາເຮັດວຽກໃນສຳນັກງານຕົນຫຼາຍກວ່າເກົ່າ.

ຂ່າວໂດຍ: Han Chengyuan, Liu Ziyu

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

### ເນື້ອໃນເພີ່ມເຕີມ

ປີ 2024, ດ່ານບໍ່ຫານໄດ້ສຳເລັດການຂົນສົ່ງສິນຄ້າຂາເຂົ້າ-ຂາອອກ 9.283.100 ໂຕນ, ເພີ່ມຂຶ້ນ 13,49% ເມື່ອທຽບໃສ່ປີ 2023 ແລະ ເພີ່ມຂຶ້ນເກືອບທົບເທົ່າ ເມື່ອທຽບໃສ່ໄລຍະທີ່ນະຄອນຄຸນໝິງ ຫາກໍປົກຄອງດ່ານບໍ່ຫານ. ປັດຈຸບັນ, ດ່ານບໍ່ຫານ ໄດ້ກາຍເປັນດ່ານທາງບົກທີ່ມີປະລິມານການຂົນສົ່ງສິນຄ້າຂາເຂົ້າ-ຂາອອກໃຫຍ່ທີ່ສຸດຂອງແຂວງຢຸນນານ.

ປີ 2024, ເຂດຮ່ວມມື ບໍ່ຫານ-ບໍ່ເຕ່ນ ໄດ້ເຊັນສັນຍາກັບວິສາຫະກິດ 70 ແຫ່ງ, ມີວິສາຫະກິດ 69 ແຫ່ງ ປະຈຳຢູ່ດ່ານ ບໍ່ຫານ ແລະ ໄດ້ສ້າງຕັ້ງ 59 ໂຄງການ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ



ynzhanba@163.com
laos.yunnangateway.com